# ຍຸດທະສາດເຂດຈຸດສຸມ ເພື່ອການແກ້ໄຂ ຄວາມທຸກຍາກ ແລະ ພັດທະນາຊົນນະບົດ

## ແລະ ລາຍງານຄວາມຄືບໜ້າຂອງຂະແໜງການຍ່ອຍພັດທະນາຊົນນະບົດ (SSWG-RD)

ກອງປະຊຸມຂະແໜງການກະສິກຳ ແລະ ພັດທະນາຊົນນະບົດ
ຄັ້ງວັນທີ 2 ຕຸລາ 2018

ສະເໜີໂດຍ

ທ່ານ......

ຮອງຫົວໜ້າກົມພັດທະນາຊົນນະບົດ ແລະ ສະຫະກອນ

# ເນື້ອໃນນຳສະເໜີ

1. ຄວາມຄືບໜ້າຂອງຂະແໜງການຍ່ອຍພັດທະນາຊົນນະບົດ (SSWG-RD)
2. ແຜນຍຸດທະສາດແຫ່ງຊາດ ເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ (NGPES) ໂດຍຫຍໍ້
3. ນິຕິກຳ ແລະ ນະໂຍບາຍການພັດທະນາຊົນນະບົດ
4. ຂໍ້ຕົກລົງ ເລກທີ 65/ນຍ ວ່າດ້ວຍການຮັບຮອງເອົາຈຸດສຸມພັດທະນາທີ່ເປັນບູລິມະສິດ ໄລຍະ 2016-2020
5. ຄວາມຄືບໜ້າຂອງ ດຳລັດ 348/ລບ
6. ຄວາມຄືບໜ້າຂອງ ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ

# 1. ຄວາມຄືບໜ້າຂອງຂະແໜງການຍ່ອຍພັດທະນາຊົນນະບົດ (sswg-rd)

- ໄດ້ຈັດກອງປະຊຸມດ້ານວິຊາການ ກັບ ພາກສ່ວນທີ່ກ່ຽວຂ້ອງ ໃນວັນທີ 18 ມິຖຸນາ ແລະ 30 ສິງຫາ 2018 ຮ່ວມກັບ ຂະແໜງທີ່ກ່ຽວຂ້ອງ ເຊັ່ນ:
  - ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
  - ຂະແໜງສຶກສາທິການ ແລະ ກິລາ
  - ຂະແໜງແຜນການ ແລະ ການລົງທຶນ
  - ຂະແໜງອຸດສາຫະກຳ ແລະ ການຄ້າ
  - ພາກສ່ວນທະນາຄານ
  - ອົງການສຶກສາຄົ້ນຄວ້າ ແລະ ສະຖາບັນ

# 1. ຄວາມຄືບໜ້າຂອງຂະແໜງການຍ່ອຍພັດທະນາຊົນນະບົດ (sswg-rd) (ຕໍ່)

| ຫົວຂໍ້ | ພາກສ່ວນ | ເນື້ອໃນຕົ້ນຕໍ |
|---|---|---|
| ພາລະບົດບາດຂອງຂະແໜງການຍ່ອຍພັດທະນາຊົນນະບົດ | ກອງເລຂາ | ຈຸດປະສົງ, ຂອບເຂດ, ແຜນການ |
| ມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ | ກົມ ພຊສ | ດຳລັດ 348/ລບ |
| ການຈັດສັນທີ່ດິນ | GIZ | ເຄື່ອງມືໃນການວາງແຜນ ແລະ ຈັດສັນທີ່ດິນ ໃນຂັ້ນທ້ອງຖິ່ນ |
| ກອງທຶນຫຼຸດຜ່ອນຄວາມທຸກຍາກ | ທລຍ | ຄວາມເປັນມາ, ຈຸດປະສົງ, ຜົນສຳເລັດ, ທິດທາງໃນຕໍ່ໜ້າ ແລະ ບູລິມະສິດ |
| ການເຂົ້າເຖິງການບໍລິການທາງດ້ານການເງິນໃນເຂດຊົນນະບົດ ຢູ່ ສປປ ລາວ | UNCDF | ຄວາມແຕກຕ່າງລະຫວ່າງການເງິນຢູ່ຊົນນະບົດ ແລະ ຕົວເມືອງ |

# 1. ຄວາມຄືບໜ້າຂອງຂະແໜງການຍ່ອຍພັດທະນາຊົນນະບົດ (sswg-rd) (ຕໍ່)

- ທິດທາງໃນຕໍ່ໜ້າ:
  - ສ້າງຕັ້ງຂະແໜງສະເພາະດ້ານການເງິນຊົນນະບົດ ຢູ່ພາຍໃຕ້ຂະແໜງການຍ່ອຍພັດທະນາຊົນນະບົດ ຕາມທີ່ໄດ້ຕົກລົງກັນຢູ່ກອງປະຊຸມໃນເດືອນສິງຫາ 2018
  - ຮ່າງແຜນແມ່ບົດຂອງຂະແໜງການຍ່ອຍພັດທະນາຊົນນະບົດ ເພື່ອສ້າງເປັນທິດທາງແຜນການໃນການຈັດຕັ້ງປະຕິບັດ ແລະ ຜົນຂອງການປະເມີນ
  - ກໍານົດແຜນຂອງໂຄງການພັດທະນາຊົນນະບົດ ເພື່ອຊອກຫາຊ່ອງຫວ່າງ ແລະ ສ້າງຄວາມເຂັ້ມແຂງໃຫ້ການຮ່ວມມືຂອງພາກສ່ວນທີ່ກ່ຽວຂ້ອງ

# 2.ແຜນຍຸດທະສາດແຫ່ງຊາດ ເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ (NGPES) ໂດຍຫຍໍ້

"ການພັດທະນາຈຸດສຸມ ແມ່ນແຜນຍຸດທະສາດການພັດທະນາຊົນນະບົດຂອງລັດຖະບານ ຊຶ່ງເປັນຈຸດສຸມທີ່ເປັນບູລິມະສິດ ດ້ານການບໍລິການ, ການນໍາໃຊ້ທີ່ດິນໃຫ້ມີຄວາມຍືນຍົງ ແລະ ເຮັດໃຫ້ລາຍຮັບຂອງປະຊາຊົນ ໂດຍສະເພາະແມ່ນຜູ້ທຸກຍາກເພີ່ມຂຶ້ນ. ການລົງທຶນໃສ່ການພັດທະນາຊົນນະບົດ ຕ້ອງເປັນສິ່ງຕົ້ນຕໍ ໂດຍສະເພາະແມ່ນຢູ່ບັນດາເມືອງທີ່ທຸກຍາຄທີ່ສຸດ."

*(ແຜນຍຸດທະສາດແຫ່ງຊາດ ເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ NGPES)*

# 3. ນິຕິກຳ ແລະ ນະໂຍບາຍການພັດທະນາຊົນນະບົດ

- ອີງຕາມດຳລັດ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ກະສິກຳ ແລະ ປ່າໄມ້;
- ອີງຕາມຂໍ້ຕົກລົງ ສະບັບເລກທີ 3827/ກປ, ລົງວັນທີ 18 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພັດທະນາຊົນນະບົດ ແລະ ສະຫະກອນ;
- ມະຕິເລກທີ 03/ກມສພ ວ່າດ້ວຍການສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານໃຫ້ເປັນບ້ານພັດທະນາ;
- ດຳລັດ 186/ນຍ ແລະ ຄຳສັ່ງ 03/ນຍ ວ່າດ້ວຍການຈັດສັນທີ່ດິນ ແລະ ມອບດິນ-ມອບປ່າ;

# 3. ນິຕິກຳ ແລະ ນະໂຍບາຍການພັດທະນາຊົນນະບົດ (ຕໍ່)

- ຄຳສັ່ງ ເລກທີ 04/ນຍ, 07/ນຍ ແລະ 36/ນຍ ວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບໝັ້ນຄົງໃຫ້ປະຊາຊົນ ຕິດພັນກັບການ ແກ້ໄຂບັນຫາການເຄື່ອນຍ້າຍແບບຊະຊາຍຂອງພົນລະເມືອງ;

- ດຳລັດ 84 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ;

- ວິໄສທັດ (2016-2030), ຍຸດທະສາດ (2016-2025) ແລະ ແຜນການ 5 ປີ (2016-2020);
- ຂໍ້ຕົກລົງ 65/ນຍ ວ່າດ້ວຍການຮັບຮອງເອົາຈຸດສຸມພັດທະນາທີ່ເປັນບູລິມະສິດ ໄລຍະ 2016-2020;
- ດຳລັດ 348/ລບ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານການພັດທະນາ.

# 4. ຂໍ້ຕົກລົງ ເລກທີ 65/ນຍ ວ່າດ້ວຍການຮັບຮອງເອົາຈຸດສຸມພັດທະນາທີ່ເປັນບູລິມະສິດ ໄລຍະ 2016-2020

- ຈຸດສຸມພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ
  - ທັງໝົດ 91 ຈຸດສຸມ
- ຈຸດສຸມຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນໃຫ້ແກ່ປະຊົນ
  - 145 ຈຸດ
- ຈຸດສຸມ ເປົ້າໝາຍສ້າງບ້ານໃຫ່ຍເປັນຕົວເມືອງນ້ອຍໃນຊົນນະບົດ
  - ມີ 213 ບ້ານນອນໃນ 107 ເມືອງ 16 ແຂວງ
- ບັນດາຈຸດສຸມພັດທະນາ ເປັນເປົ້າໝາຍຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກໍຄືແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກທົ່ວປະເທດ 5 ປີ (2016-2020)
- ທຸກຂະແໜງການ, ອົງການ ຜັນຂະຫຍາຍເປັນແຜນການ, ໂຄງການ, ຈັດສັນງົບປະມານ ແລະ ຍາດແຍງສຸມທຶນຮອນ ເພື່ອພັດທະນາ

# 5. ຄວາມຄືບໜ້າຂອງ ດຳລັດ 348/ລບ

- ໄດ້ກຳນົດອອກບົນພື້ນຖານ
  - ຜົນຂອງການປະເມີນ ການຈັດຕັ້ງປະຕິບັດມາດຕະຖານຄວາມທຸກຍາກ ແລະ ມາດຕະຖານການພັດທະນາ ຂອງດຳລັດ 309/ນຍ, ລົງວັນທີ 11 ພະຈິກ 2013
  - ຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ 59/ນຍ, ລົງວັນທີ 5 ສິງຫາ 2015;
- ຈຸດປະສົງ:
  - ເພື່ອເຮັດໃຫ້ ບັນດາກະຊວງ-ອົງການທຽບເທົ່າຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ
    - ຜັນຂະຫຍາຍເປັນຍຸດທະສາດ (2025),
    - ແຜນການ 5 ປີ (2016-2020) ຂອງແຕ່ລະຂັ້ນ ເມືອງ, ບ້ານ, ຄອບຄົວເຜົ່າຕ່າງໆ;
    - ໃຫ້ແທດເໝາະກັບຈຸດພິເສດ ແລະ ລະດັບການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະທ້ອງຖິ່ນ

# 5.1 ມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາແນໃສ່

- ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງທົ່ວເຖິງ
    - ໂດຍຖືເອົາຄອບຄົວເປັນເປົ້າໝາຍ, ພັດທະນາຊົນນະບົດຮອບດ້ານ ຕາມທິດສ້າງຊົນນະບົດໃໝ່
    - ໂດຍຖືເອົາການສ້າງບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ ເປັນຈຸດສຸມໄປຕາມທິດ 3 ສ້າງ ດ້ວຍການສົ່ງເສີມການຜະລິດເປັນສິນຄ້າ ແລະ ການບໍລິການສ້າງລາຍໄດ້ເຂົ້າຄອບຄົວເປັນໃຈກາງ,
- ສ້າງບ້ານພັດທະນາໃຫ້ກາຍເປັນຕົວເມືອງນ້ອຍ
    - ເປັນໃຈກາງທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ຢູ່ຊົນນະບົດ,
    - ມີຜົນກະທົບໂດຍກົງ ໃນການສ້າງສິ່ງອຳນວຍຄວາມສະດວກ ໃຫ້ແກ່ການສ້າງບ້ານພັດທະນາ ແລະ ແກ້ໄຂຄວາມທຸກຍາກ ຢູ່ບ້ານອ້ອມຂ້າງ,
    - ບ້ານທີ່ຢູ່ເຂດຫ່າງໄກສອກຫຼີກ, ເຂດທີ່ຍັງຫຍຸ້ງຍາກ,
    - ເຂດຈຸດສຸມໃຈກາງ ແລະ ບ້ານຊາຍແດນ ຢ່າງແຂງແຮງ;
- ທິດນຳໃນການພັດທະນາແມ່ນ:
    - ຕ້ອງດຳເນີນໄປທົ່ວປະເທດ ໂດຍເລີ່ມຈາກ ຄອບຄົວ; ແຕ່ວ່າ, ແຕ່ນີ້ ຮອດປີ 2020 ຕ້ອງສຸມໃສ່ ສ້າງ 213 ບ້ານພັດທະນາ ຢູ່ໃນແຕ່ລະທ້ອງຖິ່ນ ໃຫ້ກາຍເປັນຕົວ ເມືອງນ້ອຍໃນຊົນນະບົດ ທີ່ບໍ່ແມ່ນອົງການປົກຄອງຂັ້ນໜຶ່ງລະຫວ່າງເມືອງກັບບ້ານ

# 5.2 ການນຳເອົາເນື້ອໃນຂອງດຳລັດ ແລະ ບົດແນະນຳເຂົ້າແບບຟອມ


348
16.11.2017

- ເນື້ອໃນມາດຕະຖານທີ່ເອົາມາໃສ່ໃນແບບຟອມແມ່ນ
  - ເອົາມາຈາກບົດແນະນຳ 0830/ກປ, ໃນບົດແນະນຳສຳລັບມາດຕະຖານພື້ນທຸກແມ່ນເອົາຕາມມາດຕະຖານໃນດຳລັດ 348/ລບ ບໍ່ໄດ້ຂະຫຍາຍຄວາມອີກ;
  - ແຕ່ບົດແນະນຳ 0830/ກປ ມາດຕະຖານພັດທະນາ ໄດ້ຂະຫຍາຍມາດຕະຖານເພີ່ມຕື່ມ ຕົວຢ່າງ: ຄອບຄົວພັດທະນາໃນດຳລັດມີ 5 ມາດຖານ ໃນບົດແນະນຳ 0830/ກປ ໄດ້ຂະຫຍາຍເປັນ 8 ມາດຕະຖານ (ສ່ວນມາດຕະຖານອື່ນໆ ກໍເຊັ່ນດຽວກັນ)
- ຈັດເປັນກຸ່ມມາດຕະຖານ, ຕົວຊີ້ບອກ ເພື່ອຕີລາຄາສະພາບປັດຈຸບັນ ບັນລຸ ແລະ ບັນບໍ່ບັນລຸ ເຫດຜົນ ທີ່ບໍ່ບັນລຸ, ຈະມີວິທີການແກ້ໄຂໃນຕໍ່ໜ້າແນວໃດ ແລະ ເປັນແຜນການຄາດໝາຍ ສູ້ຊົນ ໃນການພັດທະນາ ຕໍ່ໜ້າ
- ເປັນເຄື່ອງມື ເຜີຍແຜ່ ເຊື່ອມຊຶມ ແລະ ເປັນບັນທັດຖານ ວັດແທກຕີລາຄາ ເລີ່ມແຕ່ຄອບຄົວ, ບ້ານ, ເມືອງ ເພື່ອເຂົ້າໃຈ ແລະ ນຳໄປເປັນຄາດໝາຍປະຕິບັດ ໃນການຍົກລະດັບການພັດທະນາ
- ເປັນຂໍ້ມູນ ແລະ ຖານຂໍ້ມູນ ໃນການປະເມີນປີ 2020 ຮອດປີ 2025
- ສ້າງທິດນຳແຕ່ເທິງລົງລຸ່ມ ແລະ ປະຕິບັດແຕ່ລຸ່ມຂຶ້ນເທິງ

# 6. ຄວາມຄືບໜ້າຂອງ ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ

**ເປົ້າໝາຍ, ເຫດຜົນ ແລະ ຄວາມຈຳເປັນໃນການສ້າງກົດໝາຍ**

- ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຫັນເຂົ້າສູ່ກົດໝາຍ ທັງເປັນບ່ອນອີງໃຫ້ແກ່ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ
- ເພື່ອຮັບປະກັນໃຫ້ເປົ້າໝາຍແກ້ໄຂຄວາມທຸກຍາກ ຕາມມະຕິກອງປະຊຸມໃຫຍ່ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງຂອງສະຫະປະຊາດບັນລຸຕາມທີ່ຄາດໄວ້

# 6.1 ໂຄງປະກອບ ແລະ ເນື້ອໃນຂອງກົດໝາຍ

ປະກອບມີ 12 ພາກ, 5 ໝວດ ແລະ 81 ມາດຕາ

- **ພາກທີ I:** ກຳນົດຈຸດປະສົງ, ນິຍາມ, ການອະທິບາຍຄຳສັບ, ນະໂຍບາຍຂອງລັດ, ຫຼັກການ, ຂອບເຂດການນຳໃຊ້ກົດໝາຍ ແລະ ການຮ່ວມມືສາກົນ;
- **ພາກທີ II:** ກຳນົດແຜນຍຸດທະສາດ, ການສ້າງແຜນ ແລະ ເນື້ອໃນແຜນຍຸດທະສາດການຈັດສັນ ພູມລຳເນົາ ແລະ ອາຊີບ
- **ພາກທີ III:**

- ກຳນົດປະເພດ, ເຂດການຈັດສັນພູມລຳເນົາ, ເຂດທຸລະກັນດານ ແລະ ຂາດເງື່ອນໄຂການພັດທະນາ, ເຂດທີ່ມີຄວາມສ່ຽງໃນການດຳລົງຊີວິດ, ເຂດທີ່ຖືກໂຄງການພັດທະນາ, ເຂດທີ່ມີລັກສະນະສະເພາະ ແລະ ເງື່ອນໄຂຜູ້ທີ່ໄດ້ຮັບການຈັດສັນພູມລຳເນົາ;
- ກຳນົດເຂດ ແລະ ມາດຕະຖານເຂດພື້ນທີ່ຮອງຮັບການຈັດສັນພູມລຳເນົາ;
- ກຳນົດຂັ້ນຕອນ, ການສຶກສາຄົ້ນຄວ້າໂຄງການ, ການທົດແທນຄ່າເສຍຫາຍ, ການກໍ່ສ້າງພື້ນຖານໂຄງລ່າງຮອງຮັບ, ການດຳເນີນການຫຍັບຍ້າຍ ຫຼື ຍົກຍ້າຍຈັດສັນ, ການພັດທະນາເຂດ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃນໄລຍະຂ້າມຜ່ານ

- **ພາກທີ IV:**
  - ກຳນົດປະເພດ, ເຂດ ແລະ ເງື່ອນໄຂ ຜູ້ໄດ້ຮັບການຈັດສັນອາຊີບ, ບູລິມະສິດ, ຂັ້ນຕອນ, ການເກັບກຳຂໍ້ມູນ, ການປະເມີນທາງເລືອກອາຊີບ, ການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດ, ການຊຸກຍູ້ສົ່ງເສີມດ້ານວິຊາການ, ການເຂົ້າເຖິງແຫຼ່ງທຶນ ແລະ ການຕະຫຼາດ, ການສ້າງນັກພັດທະນາກອນກັບທີ່ ແລະ ສ້າງຄອບຄົວຕົວແບບ ແລະ ການຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດການຈັດສັນອາຊີບ
- **ພາກທີ V:**
  - ກຳນົດໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ, ຂອງຂັ້ນສູນກາງ, ແຂວງ ແລະ ເມືອງ.

- **ພາກທີ VI:**
- ກຳນົດສິດຂອງຜູ້ພັດທະນາໂຄງການ, ພັນທະຂອງຜູ້ພັດທະນາໂຄງການ, ສິດ-ພັນທະຂອງຜູ້ໄດ້ຮັບການຈັດສັນພູມລຳເນົາ, ສິດ-ພັນທະຂອງຜູ້ໄດ້ຮັບການຈັດສັນອາຊີບ.
- **ພາກທີ VII:**
- ກຳນົດຂໍ້ຫ້າມທົ່ວໄປ, ຂໍ້ຫ້າມສຳລັບພະນັກງານ, ຂໍ້ຫ້າມສຳລັບຜູ້ພັດທະນາໂຄງການ ແລະ ຂໍ້ຫ້າມສຳລັບຜູ້ໄດ້ຮັບການຈັດສັນ.
- **ພາກທີ VIII:**
- ກຳນົດຮູບການແກ້ໄຂຂໍ້ຂັດແຍ່ງ, ການປະນີປະນອມ ຫຼື ການໄກ່ເກ່ຍ, ການແກ້ໄຂທາງດ້ານບໍລິຫານ, ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ການຕັດສິນຂອງສານປະຊາຊົນ.

- **ພາກທີ IX:**
  - ກຳນົດຄະນະກຳມະການຈັດສັນພູມລຳເນົາ ແລະ ອາຊີບ, ໂຄງປະກອບຂອງຄະນະຂັ້ນສູນກາງ, ແຂວງ,ເມືອງ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການ, ກຳນົດກອງເລຂ; ສິດ ແລະ ໜ້າທີ່ຂອງກອງເລຂາຄະນະກຳມະການຈັດສັນ ພູມລຳເນົາ ແລະອາຊີບ.
- **ພາກທີ X:**
  - ກຳນົດອົງການຄຸ້ມຄອງ, ສິດ ແລະ ໜ້າທີ່ຂອງກະຊວງກະສິກຳ ແລະ ປ່າໄມ້, ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ, ນະຄອນ, ຂອງຈຸງານກະສິກຳ ແລະ ປ່າໄມ້ຂອງໜ່ອຍງານເສດຖະກິດ-ການເງິນບ້ານ ແລະ ຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ.
  - ກຳນົດອົງການກວດກາ, ເນື້ອໃນ ແລະ ຮູບການກວດກາ.

- **ພາກ ທີ XI:**

• ກຳນົດນະໂຍບາຍຕໍ່ຜູ້ມີຜົນງານ, ມາດຕະການຕໍ່ຜູ້ລະເມີດ, ມາດຕະການສຶກສາອົບຮົມ, ມາດຕະ ການທາງວິໄນ ແລະ ມາດຕະການປັບໃໝ, ມາດຕະການທາງແພ່ງ ແລະ ມາດຕະການທາງອາຍາ.

- **ພາກ ທີ XII:**

• ກຳນົດງົບປະມານ, ການຈັດຕັ້ງປະຕິບັດ ແລະ ຜົນສັກສິດ.

# ຂໍຂອບໃຈ